VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ 027 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ 02 OCT 2019

ມະຕິ

ກອງປະຊຸມສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2019

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2019 (ຕໍ່ໄປ ນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:00 ໂມງ ຂອງວັນທີ 02 ຕຸລາ 2019 ທີ່ອາຄານສຳນັກງານວຽງຈັນເຊັ້ນເຕີ. ໂດຍການເປັນປະທານຂອງທ່ານ ເວີຍ ຫວາ ປະທານສະພາບໍລິຫານ , ສະມາຊິກສະພາບໍລິຫານຂອງ ວຈຊຕ ແລະ ຜູ້ຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ .

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງຕາມລາຍລະອຽດດັ່ງລຸ່ມນີ້:

<u>ມະຕິ 01:</u> ເຫັນດີການບໍ່ມີການແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ ເພື່ອນຳສະເໜີ ຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ພິຈາລະນາຮັບຮອງ .ກອງປະຊຸມມີຄຳເຫັນວ່າ ບໍລິສັດ ວຈຊຕ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວໃນປີ 2019 ຍັງຕ້ອງການນຳໃຊ້ທຶນຫຼາຍໃນການປະຕິບັດແຜນການພັດທະນາ ເພື່ອສ້າງຜົນປະໂຫຍດໃຫ້ແກ່ຜູ້ຖືຮຸ້ນເພີ່ມຂຶ້ນ, ຍອດເຫຼືອຂອງຜົນກຳໄລປະຈຳປີ 2018 ຈະສະສົມເຂົ້າໃນປີຖັດໄປ.

<u>ມະຕິ 02:</u> ເຫັນດີລາຍການທີ່ກ່ຽວພັນເຊິ່ງແມ່ນການຮັບຊື້ພື້ນທີ່ຫ້ອງການ 04 ຫ້ອງລະຫວ່າງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ ເພື່ອນຳສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ພິຈາລະນາຮັບຮອງ. ກອງປະຊຸມມີຄຳເຫັນວ່າ ພື້ນທີ່ຫ້ອງການ 04 ຫ້ອງທີ່ຈະຮັບຊື້ນັ້ນ ແມ່ນໄດ້ມີການຕິດສັນຍາເຊົ່າ, ຮັບຊື້ແລ້ວສາມາດສ້າງລາຍຮັບໃຫ້ແກ່ບໍລິສັດໄດ້ທັນທີ.

<u>ມະຕິ 03:</u> ເຫັນດີການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນບາງສ່ວນ ກໍ່ຄື

ຈາກການກໍ່ສ້າງຮ້ານຄ້າອ້ອມໜອງ, ຕົບແຕ່ງສູນການຄ້າ ແລະ ສຳນັກງານຫ້ອງການມາເປັນການຮັບຊື້ຊັບສິນບາງ ສ່ວນ ເພື່ອນຳສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ພິຈາລະນາຮັບຮອງ. ກອງປະຊຸມມີຄຳ ເຫັນວ່າ ການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນ ແມ່ນສາມາດຍົກສູງປະສິດທິພາບໃນການນຳໃຊ້ທຶນ ແລະ ສ້າງຜົນປະໂຫຍດໃຫ້ແກ່ຜູ້ຖືຮຸ້ນຢ່າງວ່ອງໄວ, ຊັບສິນທີ່ຈະຮັບຊື້ນັ້ນ ຄວນພິຈາລະນາຫ້ອງທີ່ຮັບຊື້ແລ້ວສາມາດສ້າງ ລາຍຮັບໃຫ້ແກ່ບໍລິສັດໄດ້ທັນທີ.

ມະຕິ 04: ເຫັນດີການສືບຕໍ່ໃຫ້ບໍລິສັດ ເອີນແອນຢັ່ງ ລາວ ຈຳກັດເປັນບໍລິສັດກວດສອບໃຫ້ບໍລິສັດ ວຽງຈັນເຊັນ ເຕີ ລາວ ມະຫາຊົນ ເພື່ອນຳສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ພິຈາລະນາຮັບຮອງ.

ມະຕິ 05: ເຫັນດີການແຕ່ງຕັ້ງ ແລະ ປົດຕຳແໜ່ງສະພາບໍລິຫານອິດສະຫຼະ ກໍ່ຄືປົດຕຳແໜ່ງຂອງທ່ານ Lu Jian ອອກຈາກຕຳແໜ່ງສະພາບໍລິຫານອິດສະຫຼະ ແລະ ແຕ່ງຕັ້ງທ່ານ ຈໍຊິ່ງ ບົວສີເມັ່ງມາ ເປັນຜູ້ຮັບຕຳແໜ່ງສະພາ ບໍລິຫານອິດສະຫຼະຄົນໃໝ່ ເພື່ອນຳສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ພິຈາລະນາ ຮັບຮອງ.

ມະຕິ 06: ເຫັນດີການແຕ່ງຕັ້ງ ແລະ ປົດຕຳແໜ່ງຂອງຄະນະອຳນວຍການ ເຊິ່ງ: ປົດຕຳແໜ່ງທ່ານ ມ້ຽວເຈີນວູ່ (Miao Zhenwu) ອອກຈາກ COO ແລະ ແຕ່ງຕັ້ງທ່ານ ຊູໂປ (Xu Bo) ມາຮັບຕຳແໜ່ງ COO .

ມະຕິ 07: ເຫັນດີການແຕ່ງຕັ້ງທ່ານ Lei Yaohai ເປັນເລຂານຸການສະພາບໍລິຫານ.

ມະຕິ 08: ເຫັນດີການດັດແກ້ເນື້ອໃນຂອງບົດສະເໜີຂອງກອງປະຊຸມສະພາບໍລິຫານຄັ້ງທີ 1 ປະຈຳປີ 2017 ບາງ ສ່ວນ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນວິສາມັນຄັ້ງທີ 1 ປະຈຳປີ 2019 ພິຈາລະນາຮັບຮອງ.

ມະຕິ 09: ເຫັນດີຈັດກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ແລະ ກຳນົດເອົາວັນທີ 14/10/2019 ເປັນມື້ປິດປຶ້ມບັນຊີລາຍຊື່ຜູ້ຖືຮຸ້ນ ເພື່ອກຳນົດສິດການເຂົ້າຮ່ວມ ກອງປະຊຸມຂອງຜູ້ຖືຮຸ້ນ ເພື່ອພິຈາລະນາວາລະຄືດັ່ງລຸ່ມນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາການບໍ່ມີການແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ ຖືຮຸ້ນ;

ວາລະທີ 2: ພິຈາລະນາ ແລະ ຮັບຮອງລາຍການທີ່ກ່ຽວພັນເຊິ່ງແມ່ນການນຳໃຊ້ທຶນທີ່ລະດົມໄດ້ມາຮັບຊື້ ພື້ນທີ່ຫ້ອງການ;

ວາລະທີ 3: ພິຈາລະນາ ແລະ ອະນຸມັດການການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກ ການອອກຈຳໜ່າຍຮຸ້ນບາງສ່ວນ;

ວາລະທີ 4: ພິຈາລະນາ ແລະ ອະນຸມັດການການສືບຕໍ່ແຕ່ງຕັ້ງບໍລິສັດ ເອິນແອນຢັ ລາວ ຈຳກັດ ເປັນ ບໍລິສັດກວດສອບ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2019;

ວາລະທີ 5: ພິຈາລະນາ ແລະ ອະນຸມັດການປົດຕຳແໜ່ງ ແລະ ແຕ່ງຕັ້ງສະພາບໍລິຫານອີກສະຫຼະ;

ວາລະທີ 6: ພິຈາລະນາ ແລະ ຮັບຮອງການການດັດແກ້ເນື້ອໃນຂອງບົດສະເໜີຂອງກອງປະຊຸມສະພາບໍລິຫານຄັ້ງທີ 1 ປະຈຳປີ 2017 ບາງສ່ວນ;

ວາລະທີ 7: ລາຍງານການແຕ່ງຕັ້ງຄະນະອຳນວຍການ ແລະ ເລຂານຸການສະພາບໍລິຫານ;

ສຳລັບວັນເວລາ, ສະຖານທີ່ ແລະ ເອກະສານຂອງກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ແມ່ນມອບສິດໃຫ້ປະທານສະພາບໍລິຫານເປັນຜູ້ກຳນົດເຊິ່ງຈະໄດ້ແຈ້ງຕື່ມພາຍຫຼັງ.

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

Wel Hua